# ການປ່ຽນຜ່ານ: ບາດກ້າວຕໍ່ໄປ

## ຈະເກີດຫຍັງຂຶ້ນເມື່ອລູກຂ້າພະເຈົ້າມີອາຍຸຄົບສາມປີ?



*ຄູ່ມືການປ່ຽນຜ່ານຈາກການບໍລິການການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນພາຍໃຕ້ Individuals With Disabilities Education Act (ກົດໝາຍວ່າດ້ວຍການສຶກສາສໍາລັບຄົນພິການ, IDEA) ພາກ C.*

ໄດ້ຮັບທຶນຈາກໂຄງການ Early Support for Infants and Toddlers (ໂຄງການສະໜັບສະໜູນແຕ່ເບື້ອງຕົ້ນ ສໍາລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ) ຂອງ Department of Children, Youth, and Families (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ) ແຫ່ງລັດ Washington.

Washington State Department of
CHILDREN, YOUTH & FAMILIES

## ການປ່ຽນຜ່ານແມ່ນຫຍັງ?

ເມື່ອລູກຂອງທ່ານມີອາຍຸຄົບສາມປີ, ການບໍລິການການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນກໍຈະສິ້ນສຸດລົງ ແລະ ອາດຈະມີການບໍລິການ ແລະ ການຊ່ວຍເຫຼືອໃໝ່ໃໝ່ໃຫ້. ຂະບວນການປ່ຽນແປງນີ້ ແມ່ນໜຶ່ງໃນຫຼາຍໆຂະບວນການປ່ຽນຜ່ານທີ່ຈະມີສໍາລັບລູກ ແລະ ຄອບຄົວຂອງທ່ານຕະຫຼອດຊີວິດຂອງທ່ານ.

ຫົກຖາເກົ້າເດືອນກ່ອນວັນຄົບຮອບວັນເກີດປີທີສາມຂອງລູກທ່ານ, ທ່ານຈະເລີ່ມເຮັດວຽກກັບ Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC) ແລະ ທີມງານຂອງທ່ານ ເພື່ອວາງແຜນສໍາລັບການປ່ຽນຜ່ານໄປສູ່ການບໍລິການການສຶກສາພິເສດກ່ອນໄວຮຽນ ຫຼື ການບໍລິການ ແລະ ການຊ່ວຍເຫຼືອອື່ນໆທີ່ຈໍາເປັນ. ຄອບຄົວ ແລະ ຜູ້ໃຫ້ບໍລິການຈະດໍາເນີນຂະບວນການນີ້ຮ່ວມກັນບົນເສັ້ນທາງທີ່ນໍາໄປສູ່ກອງປະຊຸມກ່ຽວກັບການປ່ຽນຜ່ານ.

## ຈຸດປະສົງຂອງກອງປະຊຸມກ່ຽວກັບການປ່ຽນຜ່ານແມ່ນຫຍັງ?

ໃນລະຫວ່າງກອງປະຊຸມ Individualized Family Service Plan (ກອງປະຊຸມກ່ຽວກັບແຜນການບໍລິການຄອບຄົວສະເພາະບຸກຄົນ, IFSP), ທ່ານ ແລະ ທີມງານການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງທ່ານຈະມີການສ້າງແຜນການປ່ຽນຜ່ານເປັນລາຍລັກອັກສອນ ທີ່ຈະຊ່ວຍຊີ້ນໍານໍາພາທ່ານຜ່ານຂະບວນການປ່ຽນຜ່ານ.

Individuals With Disabilities Education Act (ກົດໝາຍວ່າດ້ວຍການສຶກສາສໍາລັບຄົນພິການ, IDEA) ພາກ C ຮຽກຮ້ອງໃຫ້ຕ້ອງມີແຜນການປ່ຽນຜ່ານເປັນລາຍລັກອັກສອນກ່ອນຈະເຖິງວັນຄົບຮອບວັນເກີດທີສາມຂອງລູກຂອງທ່ານ.

## ພວກເຮົາຈະເລີ່ມການວາງແຜນການປ່ຽນຜ່ານເມື່ອໃດ?

### ຫົກຖາເກົ້າເດືອນກ່ອນວັນຄົບຮອບວັນເກີດທີສາມຂອງລູກຂອງທ່ານ:

ການວາງແຜນການປ່ຽນຜ່ານຈະເລີ່ມຕົ້ນ. FRC ຂອງທ່ານຈະຊ່ວຍອໍານວຍຄວາມສະດວກໃນການຕິດຕໍ່ລະຫວ່າງທ່ານກັບເຂດການສຶກສາຂອງທ່ານ ຫຼື ໂຄງການໃນຊຸມຊົນອື່ນໆ ເພື່ອເລີ່ມການວາງແຜນການປ່ຽນຜ່ານຂອງລູກຂອງທ່ານເມື່ອອາຍຸຄົບສາມປີ.

### ຢ່າງໜ້ອຍສາມເດືອນກ່ອນວັນຄົບຮອບວັນເກີດທີສາມຂອງລູກທ່ານ, ຈະຕ້ອງໄດ້ຈັດກອງປະຊຸມກ່ຽວກັບການວາງແຜນການປ່ຽນຜ່ານຂຶ້ນ:

ທ່ານຈະໄດ້ປະຊຸມກັບຕົວແທນຂອງເຂດການສຶກສາໃນນາມເປັນສ່ວນໜຶ່ງຂອງກອງປະຊຸມດັ່ງກ່າວ. ພວກເຂົາຈະອະທິບາຍເຖິງສິ່ງທີ່ຈະເກີດຂຶ້ນ ເພື່ອກໍານົດວ່າລູກຂອງທ່ານຈະມີເງື່ອນໄຂໄດ້ຮັບການບໍລິການການສຶກສາພິເສດກ່ອນໄວຮຽນ ຫຼື ບໍ່.

ຖ້າລູກຂອງທ່ານມີເງື່ອນໄຂໄດ້ຮັບການບໍລິການການສຶກສາພິເສດກ່ອນໄວຮຽນ ຕາມທີ່ເຂດການສຶກສາກໍານົດ, ກໍຈະມີການໃຫ້ການບໍລິການດັ່ງກ່າວໃຫ້ໂດຍຜ່ານ Individualized Education Program (ໂຄງການການສຶກສາສະເພາະບຸກຄົນ, IEP).

ການປະຊຸມກັບຜູ້ຕາງໜ້າເຂດການສຶກສາຈະບໍ່ຖືກຈັດຂຶ້ນຖ້າທ່ານບໍ່ຕ້ອງການທີ່ຈະໄດ້ຮັບການບໍລິການການສຶກສາພິເສດກ່ອນໄວຮຽນ.

## ແຜນການປ່ຽນຜ່ານແມ່ນຫຍັງ?

ແຜນການປ່ຽນຜ່ານກໍານົດວິທີການທີ່ທ່ານ, FRC ຂອງທ່ານ ແລະ ທີມງານການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງທ່ານ ຈະເຂົ້າມາຊ່ວຍເຫຼືອ ໃນຂະນະທີ່ລູກຂອງທ່ານ ແລະ ຄອບຄົວຂອງທ່ານກ້າວຜ່ານການບໍລິການການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນຕອນມີອາຍຸຄົບສາມປີ. ແຜນການດັ່ງກ່າວອະທິບາຍເຖິງການຊ່ວຍເຫຼືອ, ຂັ້ນຕອນ ແລະ ການບໍລິການຕ່າງໆ ທີ່ຈໍາເປັນຕ້ອງມີ ເມື່ອລູກຂອງທ່ານເຂົ້າສູ່ໂຄງການການສຶກສາພິເສດກ່ອນໄວຮຽນຂອງເຂດການສຶກສາ ຫຼື ການບໍລິການໃນຊຸມຊົນອື່ນໆໃນທ້ອງຖິ່ນຂອງທ່ານ ຫຼື ອອກຈາກການຊ່ວຍເຫຼືອ ແລະ ການບໍລິການຕ່າງໆໄປ ຍ້ອນວ່າລູກຂອງທ່ານບໍ່ມີສິດໄດ້ຮັບອີກຕໍ່ໄປແລ້ວ.

## ສິ່ງທີ່ຕ້ອງໄດ້ເຮັດຕໍ່ໄປສໍາລັບລູກຂອງຂ້າພະເຈົ້າແມ່ນມີຫຍັງແດ່?

### ການສ້າງແຜນການປ່ຽນຜ່ານຂອງລູກຂ້າພະເຈົ້າ:

ທ່ານ ແລະ ທີມງານການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງທ່ານ ຈະເຮັດວຽກຮ່ວມກັນເພື່ອສ້າງແຜນການດັ່ງກ່າວ. ທີມງານດັ່ງກ່າວປະກອບດ້ວຍ ທ່ານ, FRC ຂອງທ່ານ, ຄົນທີ່ເຮັດວຽກກັບລູກຂອງທ່ານຢູ່ໃນຂະນະນີ້, ບຸກຄົນອື່ນໆທີ່ທ່ານອາດຈະຕ້ອງການໃຫ້ເຂົ້າມາມີສ່ວນຮ່ວມ ແລະ ຜູ້ທີ່ອາດຈະມີສ່ວນຮ່ວມກັບລູກຂອງທ່ານໃນອະນາຄົດ. ທີມງານນີ້ຈະຕິດຕາມຄວາມຄືບໜ້າ ແລະ ຄວາມຕ້ອງການຂອງລູກຂອງທ່ານ. FRC ຈະເປັນຜູ້ປະສານງານກ່ຽວກັບການສ້າງແຜນການປ່ຽນຜ່ານ.

### ການບໍລິການທີ່ອາດຈະມີໃຫ້ລູກຂອງຂ້າພະເຈົ້າ ຫຼັງຈາກການປ່ຽນຜ່ານເມື່ອອາຍຸຄົບສາມປີແລ້ວ ແມ່ນມີຫຍັງແດ່?

ນັ້ນຂຶ້ນກັບວ່າລູກຂອງທ່ານມີຄວາມຕ້ອງການການບໍລິການ ການສຶກສາພິເສດກ່ອນໄວຮຽນ ຫຼື ບໍ່. ເຂດການສຶກສາ ຂອງທ່ານຈະກຳນົດວ່າລູກຂອງທ່ານຈະມີເງື່ອນໄຂໄດ້ຮັບ ການບໍລິການການສຶກສາພິເສດກ່ອນໄວຮຽນ ຫຼື ບໍ່. ຖ້າ ລູກຂອງທ່ານມີສິດໄດ້ຮັບ, ອາດຈະມີທາງເລືອກສະຖານ ການບໍລິການທີ່ຫຼາກຫຼາຍໃຫ້ ເຊັ່ນ: ໂຄງການໃນຊຸມຊົນ, Head Start, Early Childhood Education and Assistance Program (ໂຄງການການສຶກສາ ແລະ ການຊ່ວຍເຫຼືອໃນໄວເດັກ, ECEAP) ຫຼື ໂຄງການ ການສຶກສາພິເສດໃນໂຮງຮຽນໂຄງການການສຶກສາພິເສດ ກ່ອນໄວຮຽນ. ການສຶກສາພິເສດ ແລະ ການບໍລິການທີ່ ກ່ຽວຂ້ອງ ແມ່ນຈະໄດ້ຮັບສະໜອງຜ່ານ IEP. FRC ຈະເປັນ ຜູ້ປະສານງານກອງປະຊຸມກ່ຽວກັບແຜນການປ່ຽນຜ່ານ. ເຂດ ການສຶກສາຈະຈັດກອງປະຊຸມເພື່ອສ້າງ IEP ຂອງລູກທ່ານ.

ທ່ານສາມາດຈະຮ້ອງຂໍໃຫ້ເຊີນ FRC ຂອງທ່ານເຂົ້າຮ່ວມ ກອງປະຊຸມ IEP ໄດ້. ທ່ານສາມາດພາໝູ່ເພື່ອນ, ສະມາຊິກໃນຄອບຄົວ ຫຼື ສະມາຊິກຊຸມຊົນຄົນອື່ນໆທີ່ ທ່ານເລືອກໄປນຳທ່ານ ເພື່ອໃຫ້ການຊ່ວຍເຫຼືອໃນກອງ ປະຊຸມກ່ຽວກັບ IEP. ຖ້າທ່ານມີຜູ້ຈັດການກໍລະນີຂອງ Developmental Disabilities Administration (ອົງການຄຸ້ມຄອງຄົນພິການທາງດ້ານການພັດທະນາການ, DDA) ຫຼື ຜູ້ປະສານງານຂອງໂຄງການ Children with Special Health Care Needs (ໂຄງການສຳລັບເດັກ ທີ່ມີຄວາມຕ້ອງການໃນການເບິ່ງແຍງດູແລສຸຂະພາບພິເສດ, CSHCN), ທ່ານອາດຈະຕ້ອງໄດ້ເຊີນເຂົາເຈົ້າເຂົ້າຮ່ວມ ເຊັ່ນກັນ. ກອງປະຊຸມ IEP ຈະຕ້ອງຈັດຂຶ້ນກ່ອນວັນຄົບຮອບ ວັນເກີດທີສາມຂອງລູກທ່ານ ແລະ ຕ້ອງມີ IEP ບໍ່ໃຫ້ກາຍ ວັນຄົບຮອບວັນເກີດທີສາມຂອງລູກທ່ານ. ກອງປະຊຸມ ກ່ຽວກັບ IEP ຈະຖືກກຳນົດຈັດເປັນປະຈຳປີ. ແນວໃດ ກໍຕາມ, ທ່ານສາມາດຮ້ອງຂໍໃຫ້ຈັດກອງປະຊຸມກ່ຽວກັບ IEP ໄດ້ທຸກເວລາທີ່ທ່ານ ຫຼື ພະນັກງານຂອງໂຮງຮຽນ ຮູ້ສຶກ ວ່າມີຄວາມຕ້ອງການທີ່ຈະປຶກສາຫາລືກ່ຽວກັບໂຄງການ ສຳລັບລູກຂອງທ່ານ.

### ຈະເກີດຫຍັງຂຶ້ນ ຖ້າລູກຂອງຂ້າພະເຈົ້າບໍ່ມີ ເງື່ອນໄຂໄດ້ຮັບການບໍລິການການສຶກສາພິເສດ ກ່ອນໄວຮຽນ?

ຖ້າລູກຂອງທ່ານບໍ່ມີສິດໄດ້ຮັບການບໍລິການການສຶກສາ ພິເສດກ່ອນໄວຮຽນ, FRC ຂອງທ່ານຈະເຮັດວຽກຮ່ວມກັບ ທ່ານເພື່ອກຳນົດຕົວເລືອກທີ່ເປັນໄປໄດ້ອື່ນໆ ທີ່ມີໃຫ້ລູກ ຂອງທ່ານ ເຊັ່ນ: Head Start, ECEAP ຫຼື ໂຄງການໃນ ຊຸມຊົນອື່ນໆ.

## ບົດບາດຂອງພວກເຮົາໃນ ຂະບວນການປ່ຽນຜ່ານແມ່ນຫຍັງ?

### ເຄັດລັບກ່ຽວກັບວິທີທີ່ທ່ານສາມາດຊ່ວຍໃຫ້ ລູກຂອງທ່ານ ແລະ ຄອບຄົວຂອງທ່ານເຮັດໃຫ້ ການປ່ຽນຜ່ານມີຄວາມລາບລື່ນ:

- ເຂົ້າຮ່ວມກອງປະຊຸມໂດຍການເວົ້າກ່ຽວກັບສິ່ງທີ່ທ່ານ ຕ້ອງການຢາກໄດ້ສຳລັບລູກຂອງທ່ານ.
- ຈົດບັນທຶກສິ່ງທີ່ໄດ້ລົມກັນໃນກອງປະຊຸມໄວ້.
- ສຳຫຼວດແຫຼ່ງຊັບພະຍາກອນ ແລະ ການບໍລິການຕ່າງໆ.
- ຮັກສາປຶ້ມບັນທຶກກ່ຽວກັບການເຄື່ອນໄຫວ ແລະ ຄວາມ ສົນໃຈຂອງລູກທ່ານໄວ້. ລວມຂໍ້ມູນໃບຢັ້ງຢືນການເກີດ, ບັນທຶກການສັກຢາປ້ອງກັນພະຍາດ, ລາຍງານທາງການ ແພດ, ຮູບຖ່າຍ, ການຕີລາຄາ, ການປະເມີນ ແລະ IFSP ທີ່ຜ່ານມາຂອງລູກຂອງທ່ານເຂົ້າໃສ່. ຮູບຂອງລູກຂອງ ທ່ານຈະຊ່ວຍປັບແຕ່ງຂໍ້ເທັດຈິງ ແລະ ຂໍ້ມູນຂ່າວສານ.
- ສິ່ງທີ່ຈະເປັນປະໂຫຍດໃນການສະໜັບສະໜູນລູກ ຂອງທ່ານແມ່ນມີຫຍັງແດ່? ທ່ານເປັນຄົນທີ່ຮູ້ກ່ຽວກັບ ຄວາມຕ້ອງການຂອງລາວດີທີ່ສຸດ. ຮູ້ເຖິງສິ່ງທີ່ຈະ ຄາດຫວັງຈາກລູກຂອງທ່ານ ແລະ ເຮັດວຽກກັບເຂດ ການສຶກສາ ແລະ ທີມງານ IEP ເພື່ອໃຫ້ໄດ້ຮັບການ ບໍລິການເຫຼົ່ານັ້ນໃຫ້ແກ່ລູກຂອງທ່ານ.

## ຂັ້ນຕອນຕໍ່ໄປຂອງຂ້າພະເຈົ້າຫຼັງຈາກ ການປ່ຽນຜ່ານແມ່ນມີຫຍັງແດ່?

ຖາມວ່າມີກຸ່ມໃຫ້ຄວາມຊ່ວຍເຫຼືອຄອບຄົວ, Parent Teacher Student Association (ສະມາຄົມ ຜູ້ປົກຄອງ-ຄູອາຈານ-ນັກຮຽນ, PTSA) ຫຼື Special Education Parent Advisory Council (ສະພາ ທີ່ປຶກສາຜູ້ປົກຄອງສຳລັບການສຶກສາພິເສດ, SEPAC) ໃນ ທ້ອງຖິ່ນໃນເຂດການສຶກສາຂອງທ່ານ ຫຼື ບໍ່. ຖາມວ່າເຂດ ການສຶກສາມີພະນັກງານບໍລິການຄອບຄົວ, ພະນັກງານ ສັງຄົມສົງເຄາະ ຫຼື ນັກຈິດຕະວິທະຍາປະຈຳໂຮງຮຽນ ທີ່ ສາມາດຊ່ວຍທ່ານໄດ້ຖ້າທ່ານມີຄວາມກັງວົນ ຫຼື ບໍ່. ຂໍໃຫ້ ຈື່ໄວ້ວ່າທ່ານ, ໃນຖານະທີ່ເປັນຜູ້ປົກຄອງ, ອາດຈະໄດ້ຮັບ ຜົນປະໂຫຍດຈາກການສະໜັບສະໜູນໃຫ້ແກ່ຕົວທ່ານເອງ, ພ້ອມທັງລູກຂອງທ່ານ, ໃນຂະນະທີ່ຄອບຄົວຂອງທ່ານກ້າວ ຜ່ານຂະບວນການປ່ຽນຜ່ານ.

## ຂໍ້ມູນອື່ນທີ່ພວກເຮົາຕ້ອງໄດ້ຮູ້ແມ່ນ ມີຫຍັງແດ່?

ຖ້າລູກຂອງທ່ານມີສິດໄດ້ຮັບການບໍລິການຈາກ DDA ຢູ່ໃນ ຂະນະນີ້, ການມີສິດໄດ້ຮັບການບໍລິການຕ່າງໆ ຕ້ອງໄດ້ຮັບ ການກຳນົດຄືນໃໝ່ກ່ອນທີ່ລູກຂອງທ່ານຈະມີອາຍຸຄົບສີ່ປີ. ມັນເປັນສິ່ງສຳຄັນທີ່ທ່ານຈະຕ້ອງໄດ້ແບ່ງປັນການປະເມີນ ການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ, ຂໍ້ມູນການປ່ຽນຜ່ານ ແລະ ບົດລາຍງານການຕີລາຄາຂອງເຂດການສຶກສາ ໃນ ລະຫວ່າງກຳລັງດຳເນີນຂະບວນການປ່ຽນຜ່ານນີ້ກັບ DDA. **ການຍິນຍອມຂອງທ່ານໃຫ້ເປີດເຜີຍຂໍ້ມູນນີ້ໃຫ້ແກ່ DDA ແມ່ນໄດ້ຮັບຈາກເຂດການສຶກສາຢູ່ໃນກອງປະຊຸມກ່ຽວກັບ ການວາງແຜນການປ່ຽນຜ່ານ.** ຖ້າບໍ່ໄດ້ຮັບຂໍ້ມູນທີ່ຈະໃຊ້ ເພື່ອກຳນົດການມີສິດໄດ້ຮັບຢ່າງຕໍ່ເນື່ອງຂອງລູກຂອງທ່ານ, ລູກຂອງທ່ານຈະຖືກຕັດສິດອອກຈາກການບໍລິການຂອງ DDA ເມື່ອອາຍຸຄົບສີ່ປີ.

# ຂ້າພະເຈົ້າສາມາດໄປຂໍຄວາມຊ່ວຍເຫຼືອ ຫຼື ຂໍ້ມູນເພີ່ມຕື່ມໄດ້ຢູ່ໃສແດ່?



ໂຄງການ Early Support for Infants and Toddlers (ໂຄງການສະໜັບສະໜູນແຕ່ເບື້ອງຕົ້ນ ສໍາລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ, ESIT) ຂອງ Department of Children, Youth, and Families (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ) ເປັນຜູ້ຊີ້ນໍາລະບົບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງ IDEA ພາກ C ໃນທົ່ວລັດ.

**esit@dcyf.wa.gov**
**www.dcyf.wa.gov**

ສໍາລັບຂໍ້ມູນເພີ່ມຕື່ມ ແລະ ການນໍາສົ່ງຕໍ່ໄປຍັງ family resources coordinator (ຜູ້ປະສານງານຊັບພະຍາກອນຂອງຄອບຄົວ, FRC) ໃຫ້ຕິດຕໍ່ Help Me Grow Washington ເພື່ອຂໍລາຍຊື່ຂອງ FRC ໃນເຂດທ້ອງຖິ່ນຂອງທ່ານ.

1-800-322-2588

Fathers Network ແຫ່ງລັດ Washington ຢູ່ທີ່ສູນ Kindering Center. ໃຫ້ການສະໜັບສະໜູນ ແລະ ໃຫ້ການຊ່ວຍເຫຼືອ ແລະ ແຫຼ່ງຊັບພະຍາກອນສໍາລັບຜູ້ຊາຍໝົດທຸກຄົນ ແລະ ຄອບຄົວຂອງເຂົາເຈົ້າທີ່ມີລູກທີ່ມີຄວາມຕ້ອງການພິເສດ.

(425) 653-4286

**www.fathersnetwork.org**

PAVE ເປັນສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານສໍາລັບຜູ້ປົກຄອງໃນທົ່ວລັດ ທີ່ໃຫ້ການຊ່ວຍເຫຼືອແກ່ບັນດາຄອບຄົວທີ່ມີລູກພິການ, ໃນຊ່ວງອາຍຸຕັ້ງແຕ່ແລກເກີດຈົນເຖິງເປັນຜູ້ໃຫຍ່.

1-800-572-7368 (800-5 PARENT)

**www.wapave.org**

ໂຄງການ Parent to Parent ຂອງລັດ Washington ແມ່ນເຄືອຂ່າຍຜູ້ປົກຄອງໃນທົ່ວລັດທີ່ໃຫ້ການຊ່ວຍເຫຼືອ ແລະ ຂໍ້ມູນທາງດ້ານອາລົມແກ່ຜູ້ປົກຄອງທີ່ມີລູກພິການ ຫຼື ມີການພັດທະນາການຊັກຊ້າ.

1-800-821-5927

**www.arcwa.org/parent-to-parent**

ມູນໂຄ້ງແຫ່ງລັດ Washington ສົ່ງເສີມການສຶກສາ, ສຸຂະພາບ, ການກຸ້ມຕົນເອງ, ການສະໜັບສະໜູນຕົນເອງ, ການບໍ່ແບ່ງແຍກ ແລະ ທາງເລືອກຂອງບຸກຄົນທີ່ມີຄວາມພິການທາງດ້ານການພັດທະນາການ ແລະ ຄອບຄົວຂອງເຂົາເຈົ້າ.

1-888-754-8798

**www.arcwa.org**

Office of Superintendent of Public Instruction (ຫ້ອງການຄຸ້ມຄອງດູແລການສຶດສອນພາກລັດ) ມີເວັບໄຊທີ່ເປັນປະໂຫຍດສໍາລັບຄອບຄົວຂອງເດັກທີ່ໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ຢູ່ທີ່:

**www.K12.wa.us/SpecialEd/Families/default.aspx**


ໂຄງການ **Early Support for Infants and Toddlers** (ໂຄງການສະໜັບສະໜູນແຕ່ເບື້ອງຕົ້ນ ສໍາລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ) ຂອງ **Department of Children, Youth, and Families** (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ) ແຫ່ງລັດ **Washington**

PO Box 40970
Olympia WA 98504-0970
**esit@dcyf.wa.gov**
**www.dcyf.wa.gov/services/child-development-supports/esit**


*ການຈໍາແນກແມ່ນຖືກຫ້າມໃນບັນດາໂຄງການ ແລະ ກິດຈະກໍາທຸກຢ່າງ. ບໍ່ມີບຸກຄົນໃດໜຶ່ງຈະຖືກຈໍາແນກບົນພື້ນຖານເຊື້ອຊາດ, ສີຜິວ, ສາດສະໜາ, ຄວາມເຊື່ອຖື, ຊາດກໍາເນີດ, ເພດ, ອາຍຸ ຫຼື ຄວາມພິການ.*

*ຖ້າທ່ານຕ້ອງການສໍາເນົາຂອງເອກະສານນີ້ ໃນຮູບແບບອື່ນ ຫຼື ພາສາອື່ນ, ກະລຸນາຕິດຕໍ່ DCYF Constituent Relations (ຝ່າຍປະຊາສໍາພັນຂອງສະຖາບັນຂອງ DCYF) (1-800-723-4831 | 360-902-8060, **ConstRelations@dcyf.wa.gov**).*


DCYF PUBLICATION FS_0004 | DEL 11-013 LA (07-2023) Laotian